ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳມະນາຫົວຂໍ້ " ການລາຍງານຂໍ້ມູນຂ່າວສານສິນເຊື່ອ "




ທະນາຄານແຫ່ງ ສປປ ລາວ ຮ່ວມກັບອົງການ IFC ແລະ ສະຖານທູດອັງກິດປະຈຳລາວ ໄດ້ຈັດສຳມະນາພາຍໃຕ້ຫົວຂໍ້ " **ລະບົບການລາຍງານຂໍ້ມູນຂ່າວສານສິນເຊື່ອ** " ທີ່ນະຄອນຫຼວງວຽງຈັນ ໃນຕອນເຊົ້າຂອງວັນທີ 12 ມັງກອນ 2017 ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ນາງ ວັນທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ທ່ານ James Toone ຮອງເອກອັກຄະລັດຊະທູດອັງກິດ ປະຈຳລາວ ແລະ ທ່ານ ພົງສະຫວັນ ພົມກອງ ຫົວໜ້າຫ້ອງການ IFC ປະຈຳລາວ ພ້ອມນີ້ກໍ່ມີວິຊາການຈາກທະນາຄານແຫ່ງ ສປປ ລາວ, ບັນດາທະນາຄານທຸລະກິດລັດ-ລັດຮຸ້ນສ່ວນ, ທະນາຄານເອກກະຊົນ ແລະ ສາຂາທະນາຄານຕ່າງປະເທດເຂົ້າຮ່ວມ.





ການສໍາມະນາຄັ້ງນີ້ແມ່ນໄດ້ນໍາສະເໜີແນວຄວາມຄິດພື້ນຖານດ້ານການເງິນ ແລະ ຄຸນລັກສະນະຂອງການລາຍງານຂໍ້ມູນຂ່າວສານສິນເຊື່ອ, ຄວາມສໍາພັນກັບກົດໝາຍຂອງປະເທດ ແລະຂໍ້ມູນຂ່າວສານສິນເຊື່ອໃນອານາຄົດ, ຄວາມຈໍາເປັນຂອງການມີການບໍລິການສະໜອງຂໍ້ມູນດ້ານສິນເຊື່ອ ແບບຂອງພາກລັດ ແລະ ພາກເອກກະຊົນ ຫຼື ທັງສອງພາກສ່ວນ, ຖອດຖອນບົດຮຽນກ່ຽວກັບລະບົບລາຍງານຂໍ້ມູນຂ່າວສານສິນເຊື່ອ ຈາກບັນດາປະເທດພາກພື້ນເຊັ່ນ: ຂໍ້ມູນຂ່າວສານສິນເຊື່ອຂອງປະເທດສິງກະໂປ, ໄທ ແລະ ກໍາປູເຈຍ ແລະ ຄວາມຈໍາເປັນຂອງການມີສູນຂໍ້ມູນຂ່າວສານສິນເຊື່ອທີ່ທັນສະໄໝໃນ ສປປ ລາວ.

ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ເນັ້ນວ່າ: ສູນຂໍ້ມູນຂ່າວສານສິນເຊື່ອຈະປະຕິບັດໜ້າທີ່ອັນສໍາຄັນໃນການເກັບກໍາ ແລະ ສະໜອງຂໍ້ມູນຂ່າວສານທາງດ້ານສິນເຊື່ອທີ່ມີຄວາມໜ້າເຊື່ອຖື, ແນໃສ່ຫຼຸດຜ່ອນ ແລະ ຈໍາກັດຄວາມສ່ຽງທີ່ອາດເກີດຂຶ້ນໃນການໃຫ້ສິນເຊື່ອຂອງບັນດາທະນາຄານທຸລະກິດ ແລະ ຂອງສະຖາບັນການເງິນ.

ທ່ານ ພົງສະຫວັນ ພົມກອງ ຫົວໜ້າຫ້ອງການ **IFC** ໄດ້ກ່າວວ່າ: ລະບົບການລາຍງານຂໍ້ມູນຂ່າວສານສິນເຊື່ອ ແມ່ນລະບົບໜຶ່ງທີ່ຈໍາເປັນສໍາລັບການສ້າງໃຫ້ຂະແໜງການເງິນມີຄວາມໝັ້ນຄົງ ພ້ອມທັງເປັນການເອື້ອອໍານວຍຄວາມສະດວກໃຫ້ແກ່ການເຂົ້າເຖິງແຫຼ່ງທຶນສໍາລັບທຸລະກິດຂະໜາດນ້ອຍ ສິ່ງດັ່ງກ່າວຍັງເປັນເຄື່ອງມືທີ່ມີປະສິດທີ່ພາບໃຫ້ແກ່ບັນດາສະຖາບັນການເງິນ ໃນການບໍລິຫານຄວາມສ່ຽງທາງດ້ານສິນເຊື່ອ, ຂະຫຍາຍການໃຫ້ກູ້ຢືມ ແລະ ສະໜັບສະໜູນການເຂົ້າເຖິງທາງດ້ານການເງິນ.




*✵ ຂ່າວ-ພາບ: ສົມອົກ ເຄນຄໍາແພງ*

*ຢູ່ເມືອງລາວໃຊ້ແຕ່ເງິນກີບ*